ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ກົມຈັດຕັ້ງ ແລະ ພະນັກງານ

ເລກທີ 1397 /ກຈພ

ນະຄອນຫຼວງວຽງຈັນ, ວັນທີ 08 ກັນຍາ 2021

## ແຈ້ງການ

**ເຖິງ: ບັນດາທ່ານຜູ້ປົກຄອງຂອງຜູ້ທີ່ສະໝັກສອບເສັງເຂົ້າເປັນລັດຖະກອນໃໝ່ຂອງກະຊວງການເງິນ ປີ 2021.**

**ເລື່ອງ: ການສອບເສັງບັນຈຸລັດຖະກອນໃໝ່ຂອງກະຊວງການເງິນ ປີ 2021 ຮອບທີ II ໃນສາຂາວິຊາພາສາອັງກິດ, ໄອທີ ແລະ ສື່ມວນຊົນ.**

- ອີງຕາມ ກົດໝາຍວ່າດ້ວຍພະນັກງານ-ລັດຖະກອນ ສະບັບເລກທີ 74/ສພຊ, ລົງວັນທີ 18 ທັນວາ 2015;
- ອີງຕາມ ຂໍ້ຂໍ້ຕົກລົງຂອງລັດຖະມົນຕີກະຊວງການເງິນວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກົມຈັດຕັ້ງ ແລະ ພະນັກງານ ສະບັບເລກທີ 5000/ກງ, ລົງວັນທີ 18 ທັນວາ 2019;
- ອີງຕາມ ຜົນຄະແນນການສອບເສັງບັນຈຸລັດຖະກອນໃໝ່ ປີ 2021 ຄັ້ງວັນທີ 14 ສິງຫາ 2021.

ກົມຈັດຕັ້ງ ແລະ ພະນັກງານ ກະຊວງການເງິນ ຂໍຖືເປັນກຽດແຈ້ງມາຍັງທ່ານຜູ້ປົກຄອງຂອງຜູ້ທີ່ສະໝັກສອບເສັງບັນຈຸລັດຖະກອນໃໝ່ຂອງກະຊວງການເງິນ ປີ 2021 **ໃນສາຂາວິຊາພາສາອັງກິດ, ໄອທີ ແລະ ສື່ມວນຊົນ** ທີ່ເຂົ້າຮ່ວມສອບເສັງ ຄັ້ງວັນທີ 14 ສິງຫາ 2021 ຊຶ່ງຄະນະຮັບຜິດຊອບສອບເສັງລັດຖະກອນໃໝ່ຂອງກະຊວງການເງິນ ປີ 2021 **ຈະໄດ້ມີການສອບສຳພາດ ໃນຮອບທີ II ຄັ້ງວັນທີ 11 ກັນຍາ 2021** ສະເພາະຜູ້ທີ່ໄດ້ລະດັບຄາດໝາຍ ເພື່ອຄັດເລືອກບັນຈຸເຂົ້າເປັນລັດຖະກອນໃໝ່ຂອງກະຊວງການເງິນ ປີ 2021. **ສະນັ້ນ, ຖ້າຜູ້ປົກຄອງຂອງນັກສອບເສັງທ່ານໃດມີຄວາມສົນໃຈຢາກມາຕິດຕາມເບິ່ງການສອບສຳພາດ** ແມ່ນໃຫ້ເຂົ້າມາຕິດຕາມເບິ່ງໄດ້ຢູ່ໃນ**ສະຖານທີ່ສອບສຳພາດ** (ກະຊວງການເງິນ) ເລີ່ມແຕ່ເວລາ **08:00** ໂມງ ເປັນຕົ້ນໄປ ຊຶ່ງມີລາຍລະອຽດດັ່ງນີ້:

| | |
|---|---|
| 1. **ສາຂາວິຊາພາສາອັງກິດ** | ສຳພາດ ຢູ່ທີ່ຫ້ອງປະຊຸມຂອງກົມການເງິນຕ່າງປະເທດ ແລະ ຄຸ້ມຄອງໜີ້ສິນ, ກະຊວງການເງິນ (ຕຶກ 4 ຊັ້ນ, **ສຳພາດຢູ່ຊັ້ນ 2**); |
| 2. **ສາຂາວິຊາໄອທີ** | ສອບເສັງພາກປະຕິບັດຕົວຈິງ ແລະ ສຳພາດ ຢູ່ທີ່ຕຶກຂອງກົມສ່ວຍສາອາກອນ, ກະຊວງການເງິນ (ຊັ້ນ 1); |
| 3. **ສາຂາວິຊາສື່ມວນຊົນ** | ສຳພາດ ຢູ່ທີ່ຫ້ອງປະຊຸມຂອງກະຊວງການເງິນ (ຕຶກ 4 ຊັ້ນ, **ສຳພາດຢູ່ຊັ້ນ 3**). |

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ.

**ຫົວໜ້າກົມຈັດຕັ້ງ ແລະ ພະນັກງານ**

**ຮອງຫົວໜ້າຄະນະຮັບຜິດຊອບການສອບເສັງ**

ກະຊວງການເງິນ ກົມຈັດຕັ້ງແລະພະນັກງານ

**ກົງຄຳ ສິດທິວົງລະດາ**

ສອບຖາມຂໍ້ມູນເພີ່ມເຕີມໂທ

ກົມຈັດຕັ້ງ ແລະ ພະນັກງານ

ທ່ານ ນາງ ປາວີນາ ອິນທະກຸມມານ 020 22222883.